# ຊູ່ສີເອັດໄດ່ກ້ຽງທີ່

# ຄູ່ມື

# ເຮັດໄຮ່ຄົງທີ່

## ແບບ ຮັກສາດິນ ນ້ຳ ແລະຄວາມອຸດົມສົມບູນ

ການທຳການປູກຝັງຢູ່ຕາມເປີ້ນພູທີ່ກັນບໍ່ໃຫ້ນ້ຳເຊາະດິນເສັຍ

## ຄຳນຳ

ການເຮັດໄຮ່ຄົງທີ່ ແມ່ນການເຮັດໄຮ່ທີ່ ປັບປຸງດິນ ຄຸມຫຍ້າ ແລະຮັກສາຄວາມຊຸ່ມຊື່ນໃນດິນໄປພ້ອມໆກັນ ດ້ວຍການປູກພືດຝຸ່ນຂຽວເປັນແຖວລະດັບ ຕັດເປີ້ນພູເພື່ອກັນ ນ້ຳເຊາະ. ພວກເຮົາເອີ້ນແຖວພືດກັນນ້ຳເຊາະ ດັ່ງກ່າວວ່າ "ຄັນໄຮ່". ພືດທີ່ນຳມາປູກເປັນຄັນໄຮ່ໄດ້ ແມ່ນພືດທີ່ທົນທານຕໍ່ຄວາມແຫ້ງແລ້ງ ແຕກແໜງດີໃນເມື່ອຕັດຕອນ. ໃບແລະງ່າຂອງພືດຄັນໄຮ່ ທີ່ຕັດຕອນມານັ້ນ ແມ່ນເອົາມາປົກໜ້າດິນ ເພື່ອຄຸມຫຍ້າ ແລະຮັກສາຄວາມຊຸ່ມຂອງດິນ. ເມື່ອແຫ້ງເປື່ອຍ ໃບໄມ້ດັ່ງກ່າວກໍກາຍເປັນຝຸ່ນ ປັບປຸງດິນໄຮ່ໃຫ້ງາມຍິ່ງກວ່າເກົ່າ. ຮາກ ແລະເຫງົ້າຂອງພືດຄັນໄຮ່ຊ່ວຍຮັກສາດິນໜ້າອັນອຸດົມສົມບູນຂອງໄຮ່ໄວ້ ບໍ່ໃຫ້ນ້ຳຝົນໄຫລເຊາະເອົາໄປ. ລະຫວ່າງຄັນໄຮ່ແມ່ນ ແຖວໄຮ່ ຊຶ່ງເປັນບ່ອນປູກພືດໄຮ່ຕ່າງໆ ເຊັ່ນ ເຂົ້າ ສາລີ ມັນຕົ້ນ ຖົ່ວດິນ ແລະອື່ນໆ. ການປູກພືດໃນໄຮ່ຄົງທີ່ນີ້ ແມ່ນເຮົາປູກຫລາຍແນວ ຊຶ່ງມີທັງພືດອາຍຸສັ້ນ ແລະພືດອາຍຸຍາວ. ພືດອາຍຸສັ້ນ ແມ່ນພືດທີ່ເຮົາປູກແລ້ວ ເກັບຜົນ ແລະຕ້ອງປູກໃໝ່ອີກພາຍໃນ 1 ຫາ 2 ປີ. ພືດອາຍຸຍາວ ແມ່ນພືດທີ່ຫລັງຈາກປູກແລ້ວ ເກັບຜົນໄດ້ຫລາຍ ລະດູ ຫລືຫລາຍປີ ເຊັ່ນ ຕົ້ນໄມ້ໃຫ້ໝາກ ແລະ ອື່ນ ໆ. ການປູກພືດຫລາຍແນວ ແລະຫລາຍສະນິດໃນພື້ນໄຮ່ນີ້ ຊ່ວຍສ້າງຄວາມແນ່ນອນ ທາງດ້ານຜົນຜະລິດ ແລະລາຍໄດ້ໃຫ້ແກ່ຊາວບ້ານເພີ່ມຂຶ້ນ. ມັນຈະລຸດຜ່ອນການທຳມາຫາກິນແບບເອື່ອຍອີງໃສ່ທຳມະຊາດຂອງຊາວພູເຮົາໄດ້ຈຳນວນນຶ່ງ. ເມື່ອຈັດຂຶ້ນໄດ້ມາດຕາຖານແລ້ວຈະມີການຜະລິດຜົນຕະລອດປີ. ໄຮ່ຄົງທີ່ ຈະປະກອບດ້ວຍພາກສ່ວນໄຮ່ໝູນວຽນ ເປັນແຖວໆແລະພາກສ່ວນຕົ້ນໄມ້ຍາວນານສັບປົນກັນຄືປ່າທຳມະຊາດ ຊຶ່ງແຕ່ລະພືດເປັນປະໂຫຍດໃຫ້ແກ່ຊາວບ້ານ ທາງດ້ານອາຫານ ແລະເສດຖະກິດ. ຜົນທີ່ຈະໄດ້ຮັບ ກໍແມ່ນ ຊາວບ້ານກໍຈະໄດ້ເສັຍເວລາເລື້ອນລອຍເຂົ້າປ່າຫາກິນແລະຈະບໍ່ຈຳເປັນຕ້ອງຍົກຍ້າຍບ້ານເຮືອນຈາກບ່ອນເດີມ.

ການເຮັດໄຮ່ຄົງທີ່ນີ້ໄດ້ພັດທະນາຂື້ນຢູ່ປະເທດ ຟີລິບປິນ. ປັດຈຸບັນນີ້ ປະເທດອິນໂດເນເຊັຍ ແລະປະເທດໄທກໍໄດ້ນຳເອົາໄປກາຍແບບພົມຂະຫຍາຍເປັນຂະບວນ. ການສັງເກດການລວມຊຶ່ງບອກວ່າ ການເຮັດໄຮ່ຄົງທີ່ນີ້ຈະສຳເລັດຜົນດີໃນເມື່ອມີການປຶກສາຫາລືກັບຊາວບ້ານທຸກຊົ່ວໄລຍະການປະຕິບັດ ໂດຍສະເພາະແມ່ນໃນບາດກ້າວຂື້ນແຜນ ວ່າຈະປູກພືດອັນໃດແດ່ໃນພື້ນໄຮ່ຂອງເຈົ້າຂອງໄຮ່ນັ້ນ. ຄວນພະຍາຍາມຫາຊ່ອງທາງໃຫ້ຊາວບ້ານເຂົ້າໃຈວ່າ ໄຮ່ຄົງທີ່ດັ່ງກ່າວເປັນໄຮ່ຂອງຊາວບ້ານນັ້ນເອງ ນີ້ກໍເພື່ອໃຫ້ເຂົາມີນ້ຳໃຈເປັນເຈົ້າການໃນວຽກງານການຜະລິດຂອງຕົນ ແລະເພື່ອໃຫ້ເຂົາເຊື່ອໝັ້ນຕົນເອງເພີ່ມຂຶ້ນຕື່ມ.

0539/04 

## ບາດກ້າວທີ 1

## ເຮັດຮົ້ວຈີວະ

ຮົ້ວຈີວະ ແມ່ນການປູກຕົ້ນໄມ້ເປັນຫລັກຮົ້ວ. ມັນທົນໄດ້ຫລາຍປີ ລົດຜ່ອນແຮງງານໃນການເຮັດຮົ້ວປະເພນີແຕ່ລະປີ ແລະກໍບໍ່ສິ້ນເປືອງຕົ້ນທຶນຂອງຊາວບ້ານຜູ້ຍາກຈົນ.

ການເຮັດຮົ້ວຈີວະນີ້ ເຮົາຈະເລີ້ມຕົ້ນດ້ວຍການເຮັດຮົ້ວປະເພນີສາກ່ອນກໍໄດ້ ແລ້ວຈຶ່ງປູກຮົ້ວຈີວະເສີມໃສ່ດ້ານໃນ ຫລືວ່າເຮົາຈະເລີ້ມດ້ວຍຮົ້ວຈີວະໂລດກໍໄດ້.

ການປູກພືດເຮັດຮົ້ວຈີວະນີ້ມີຢູ່ ສອງ ວິທີ

ວິທີທີ ນຶ່ງ ແມ່ນການປູກຫລັກຮົ້ວເປັນແຖວດຽວ ຈະປູກດ້ວຍແກ່ນ ຫລືວ່າຈະປູກດ້ວຍຝັງງ່າກໍໄດ້. ຖ້າແນວປູກບໍ່ມີພຽງພໍ ເຮົາຈະປູກຮ່າງນ້ອຍນຶ່ງກໍໄດ້ ປີຫນ້າຈຶ່ງຄ່ອຍປູກສັບຫວ່າງໃຫ້ຖີ່ກວ່າເກົ່າ. ການປູກຮົ້ວແຖວນີ້ຍັງຕ້ອງການໄມ້ຮາວຮົ້ວຢູ່. ແຕ່ການປູໃຫ້ຖີ່ນັ້ນຈະເຮັດໃຫ້ຮົ້ວແຂງແຮງດີ.

ວິທີທີ ສອງ ແມ່ນການປູກຫລັກຮົ້ວໃຫ້ຖີ່ເປັນສອງແຖວສະຫລັບກັນ ຈະປູກດ້ວຍແກ່ນ ຫລືລ້າກໍໄດ້. ຄວາມຮ່າງລະຫວ່າງແຖວແລະຕົ້ນມີປະມານ ຄືບນຶ່ງ ຫາ ສາມຄືບ ຂຶ້ນກັບວ່າເຮົາຈະກັນສັດນ້ອຍຫລືສັດໃຫ່ຍ. ການປູກຮົ້ວສອງແຖວນີ້ບໍ່ຕ້ອງການໃຊ້ໄມ້ຮາວຮົ້ວ ແລະຈະໃຊ້ປະໂຫຍດດີໃນເມື່ອໄມ້ຮົ້ວມີອາຍຸ 2 ຫາ 3 ປີ.

ພືດທີ່ສາມາດນຳເອົາມາປູກເຮັດຮົ້ວໄດ້ມີ

ກະຖິນ
ອາມແປ
ຫມາກເຍົາແກ້ວ
ດອກປູ
ແຄຂາວ
ສີ້ມພໍ່
ຜັກຄະຍະ
ກະເດົາ





## ບາດກ້າວທີ 2

## ເຮັດໄມ້ງ່າມແທກລະດັບ

ໄມ້ງ່າມມີຢູ່ ສອງປະເພດ. ປະເພດທີໜຶ່ງແມ່ນໃຊ້ນ້ຳທ່ຽງ ແລະປະເພດທີ ສອງແມ່ນໃຊ້ໝາກໂຕ້ນ ຫຼືຕຶ່ງ ເປັນເຄື່ອງແທກໝາຍວ່າ ແຕ່ລະຂາຂອງໄມ້ງ່າມນັ້ນຕັ້ງຢູ່ບ່ອນທີ່ມີລະດັບພຽງກັນຫຼືບໍ່.

ເອົາໄມ້ຍາວ ແມດໜຶ່ງສອງອັນມາມັດສົ້ນນຶ່ງຕິດກັນໃຫ້ແໜ້ນ ແລ້ວເອົາໄມ້ໂຕທີສາມຍາວເຄິ່ງແມດມາມັດຄ້ຳລະຫວ່າງ ໄມ້ຍາວສອງອັນທີ່ມັດຕິດກັນໄວ້ແລ້ວນັ້ນ ມັນຈະເປັນຮູບໂຕ A ແລ້ວຈຶ່ງມັດໄມ້ທັງສາມໃຫ້ຕິດກັນຢ່າງແໜ້ນໜາ. ຜົນສຳເລັດກໍແມ່ນໄມ້ງ່າມທີ່ມີສອງຂາ ສ່ວນໄມ້ຕາມຄ້ຳລະຫວ່າງສອງຂານັ້ນ ເຮົາມັດນ້ຳທ່ຽງໃສ່. ໃນກໍລະນີບໍ່ມີນ້ຳທ່ຽງ ເຮົານຳໃຊ້ກ້ອນຫີນມັດໃສ່ເຊືອກສົ້ນນຶ່ງ ສ່ວນສົ້ນທີສອງນັ້ນເອົາມັດໃສ່ຈອມຂອງໄມ້ງ່າມ. ເມື່ອຕັ້ງໄມ້ງ່າມຂຶ້ນ ໝາກໂຕ້ນຈະຢ່ອນລົງເຄິ່ງກາງລະຫວ່າງສອງຂາຂອງໄມ້ງ່າມ.

ການນຳໃຊ້ໄມ້ງ່າມ

ຕັ້ງຂາຈ້າຍຂອງໄມ້ງ່າມປູບ່ອນທີ່ໄດ້ລະດັບແລ້ວ ຍ້າຍຂາຂວາຂຶ້ນລົງຕາມໜ້າດິນຂອງໄຮ່ເພື່ອຈອກຫາຈຸດທີ່ເປັນລະດັບດຽວກັນກັບຂາເບື້ອງຈ້າຍ. ເຮົາຈະຮູ້ວ່າທັງສອງຂາໄດ້ລະດັບດຽວກັນໃນເມື່ອນ້ຳທ່ຽງໄດ້ລະດັບ. ຫຼືວ່າ ເຊືອກທີ່ມີໝາກໂຕ້ນຢ່ອນຢູ່ນັ້ນຕາກຜ່າໃຈກາງຂອງໄມ້ງ່າມຕາມທີ່ໄດ້ໝາຍໄວ້.



## ບາດກ້າວທີ 3

## ປັກຫລັກຫມາຍແຖວລະດັບ

- ຖາງພື້ນໄຮ່ໃຫ້ແປນພໍບໍ່ໃຫ້ມີສິ່ງບັງຕາໃນຕອນເຮັດວຽກ.
- ໃຊ້ໄມ້ງ່າມລະດັບຈອກສ້າງແຖວລະດັບ ເລີ່ມຕົ້ນແຕ່ເບື້ອງເທິງຂອງໄຮ່ ໂດຍມີສອງຄົນຊ່ວຍວຽກກັນ. ຜູ້ນຶ່ງຈັບໄມ້ງ່າມລະດັບ ຜູ້ທີສອງປັກຫລັກຫມາຍລະດັບ. ການນຳໃຊ້ໄມ້ງ່າມແມ່ນປະຕິບັດຕາມທີ່ໄດ້ອະທິບາຍມາແລ້ວ ແຕ່ວ່າການຍ້າຍໄມ້ງ່າມ ຈາກບ່ອນນຶ່ງ ໄປບ່ອນສອງ ນັ້ນແມ່ນເຮົາຍຶດອາຈຸ້ຍຂອງໄມ້ງ່າມປິ່ນອ້ອມຂາຂວາຂອງມັນ. ປັກຫລັກຫມາຍຮ່າງກັນໄລຍະລະ 3 ແມັດ. ປະຕິບັດແບບນີ້ຕະຫລອດໄປຈົນສຸດລວງກວ້າງຂອງພື້ນໄຮ່. ປັກຫລັກຫມາຍແຖວລະດັບ ແຖວທີສອງ ຫລືແຖວຕໍ່ໄປ ຢູ່ເບື້ອງລຸ່ມຂອງແຖວທີນຶ່ງ. ຄວາມຮ່າງກັນລະຫວ່າງສອງແຖວບໍ່ໃຫ້ມີເກີນ 4 ຫາ 6 ແມັດ.



## ບາດກ້າວທີ 4

## ກຽມດິນປູກພືດເຮັດສວນໄຮ່

ຂຸດຫລືໄຖຕາມແຖວລະດັບທີ່ໝາຍໄວ້ໃຫ້ມີຄວາມກວ້າງສອງສອກ ແລະຍາວສຸດແຖວຂອງແຕ່ລະແຖວ. ທັບຫລືສັບດິນໃຫ້ມຸ່ນຄືກັນກັບກຽມໝານຜັກ ແລະເກັບຮາກຫຍ້າຕ່າງໆອອກ.



## ບາດກ້າວທີ 5

## ປູກພືດເຮັດຄັນໄຮ່

ປູກພືດຄັນໄຮ່ເປັນແຖວຄູ່ຕາມແຖວລະດັບທີ່ກຽມດິນໄວ້ແລ້ວ ຄວາມຮ່າງລະຫວ່າງແຖວປູກມີນຶ່ງສອກ ການຢາຍເມັດໃນແຕ່ລະແຖວນັ້ນແມ່ນໃຫ້ຖີ່ກວ່ານຶ່ງອົ້ມື. ຖ້າເອົາງ່າຫລືລຳມາປູກໃຫ້ປູກເປັນແຖວຄູ່ຄືກັນ ແຕ່ຄວາມຮ່າງລະຫວ່າງຕົ້ນນັ້ນມີ 2 ຫາ 3 ອົ້ມື.

ພືດທີ່ເອົາມາປູກເປັນພືດຄັນໄຮ່ໄດ້ ແມ່ນພືດທີ່ທົນທານຕໍ່ຄວາມແຫ້ງແລ້ງ ເມື່ອຕັດຕອນກໍປົ່ງຍອດໃຫມ່ຂຶ້ນໄດ້ດີ. ດີທີ່ສຸດແມ່ນພືດທີ່ເປັນຝຸ່ນຂຽວໄດ້ ເຊັ່ນ ກະຖິນ ຖົ່ວແຮ ແຄຈ້າງ ແຮເຣືອດ ແລະອື່ນໆ.



## ບາດກ້າວທີ ໖

# ກຽມດິນປູກພືດໄຮ່

ແຖວໄຮ່ແມ່ນບ່ອນເຮົາຈະປູກພືດເສດຖະກິດ ຫລືພືດສະບຽງໄສ່. ມັນອອບດ້ວຍຄັນໄຮ່ດ້ານເທິງແລະດ້ານລຸ່ມ.

ຖ້າຢາກປູກພືດສະບຽງກ່ອນພືດຄັນໄຮ່ໃຫ່ຍພຽງພໍມື້ນ ໃຫ້ບາແຖວປູກ. ຕ້ອງຈື່ງແຖວໄຮ່ທີ່ບໍ່ໄດ້ໄຖນັ້ນສືບກັນກັບແຖວທີ່ໄຖ ເພື່ອໃຫ້ແຖວໄຮ່ທີ່ຍັງບໍ່ທັນໄດ້ໄຖນັ້ນຊ່ວຍຈັບດິນທີ່ນ້ຳເຊາະລົງມາ. ເມື່ອໃດພືດຄັນໄຮ່ຫາກໃຫ່ຍສົມຄວນພໍກັນນ້ຳເຊາະ ໄດ້ແລ້ວຈື່ງໄຖທຸກແຖວໄຮ່ໄດ້.



# ປູກພືດອາຍຸຍາວ

ປູກພືດອາຍຸຍາວຢູ່ແຖວທີ 3 ຂອງທຸກແຖວໄຮ່ ຖ້າປູກພ້ອມກັນກັບພືດຄົ້ມໄຮ່ ເຮົາປູກໄສ່ແຖວທີ່ບໍ່ຄົ້ມໄດ້ໄຖກໍໄດ້ ພຽງແຕ່ຂຸດຂຸມ ພວນດິນ ແລະເສັຍຫຍ້າສຳລັບບ່ອນທີ່ປູກ ເມື່ອພືດຄົ້ມໄຮ່ໃຫ່ຍສູງສົມຄວນຈຶ່ງໄຖ.

ພືດຍາວນານທີ່ນຳມາປູກໃນພື້ນໄຮ່ໃດ້ກໍແມ່ນພືດທີ່ຊາວບ້ານເຮົາເຄີຍປູກຢູ່ແລ້ວ ເຊັ່ນ ໝາກມ່ວງ ມີ້ ລຳໄຍ ລິ້ນຈີ່ ຂາມ ຂຽບ ພຸກ ກ້ຽງ ເຟືອງ ກາເຟ ກວ້ຍ. ການປູກຕ້ອງປູກສັບປົນກັນແບບຊີວະພາບ ປູກພືດທີ່ມີຕົ້ນສູງຢູ່ເທິງໄຮ່ ປູກພືດທີ່ມີຕົ້ນຕ່ຳຢູ່ປາຍໄຮ່.



## ບາດກ້າວທີ ໘

# ປູກພືດອາຍຸສັ້ນ

ປູກພືດອາຍຸສັ້ນຕາມແຖວໄຮ່ທີ່ຍັງເຫລືອ. ພືດອາຍຸສັ້ນຈະເລີ້ມໃຫ້ຜົນຜະລິດໃນໄລຍະທີ່ລໍຖ້າການເຕີບໃຫຍ່ຂອງພືດອາຍຸຍາວ. ພືດອາຍຸຍາວທີ່ນຳເອົາມາປູກກໍແມ່ນພືດທີ່ເຮົາເຄີຍປູກກັນຢູ່ແລ້ວ ເຊັ່ນ ເຂົ້າ ສາລີ ມັນສະຄູ ງາ ຝ້າຍ ມັນດ້າງ ໝາກມັດ ຂີງ ຖົ່ວດຳ ຖົ່ວເຫລືອງ ຖົ່ວຂຽວ.



## ບາດກ້າວທີ ໑

## ຕັດຕອນຮອນພືດຄືນໄຮ່

ຮອນພືດຄືນໄຮ່ທີ່ສູງງາມນັ້ນໃຫ້ຍັງພຽງແອວ ແລ້ວເອົາເສດພືດທີ່ຮອນລົງມານັ້ນໄປຢາຍປົກໜ້າດິນຕາມເຫງົ້າພືດເສດຖະກິດ ເພື່ອຄຸມໜ້າດິນບໍ່ໃຫ້ຫຍ້າເກີດ ແລະກໍເປັນຝຸ່ນທຳມະຊາດພ້ອມ. ຫລັງຈາກຕັດຕອນຮອນແລ້ວພືດຄືນໄຮ່ກໍຈະແຕກຍອດແຕກແໜງຂຶ້ນມາໃໝ່ ເມື່ອໃດຍອດໃໝ່ໃຫຍ່ງາມສົມຄວນເຮົາຈິ່ງຕັດອີກ.

ງ່າແລະໃບໄມ້ທີ່ວາງລົງປົກໜ້າດິນນັ້ນ ຍັງຊ່ວຍຮັກສາຄວາມຊຸ່ມຂອງດິນຊ່ວຍໃຫ້ພືດໄຮ່ທົນທານຕໍ່ຄວາມແຫ້ງແລ້ງ ແລະເມື່ອມີຄວາມຊຸ່ມ ພວກອີ່ກະເດືອນກໍ່ຈະຂະຫຍາຍພັນໄດ້ດີຊ່ວຍລະລາຍໃບໄມ້ໃຫ້ເປື່ອຍໄວ. ເມື່ອມີອີ່ກະເດືອນຫລາຍຂຶ້ນ ດິນເຮົາກໍພຸຟັງດີຄືກັນກັບດິນທີ່ຂຸດແລະໄຖແລ້ວໆ. ອີ່ກະເດືອນເປັນຜູ້ຂຸດແລະໄຖໄຮ່ໃຫ້.



## ບາດກ້າວທີ 10

### ປູກພືດແບບໝູນວຽນ

ການເລືອກພືດອາຍຸສັ້ນມາປູກຕາມແຖວໄຮ່ນັ້ນ ຕ້ອງຄຳນຶງເຖິງການປັບປຸງດິນ. ຕ້ອງມີການຈັດປ່ຽນແນວພັນພືດປູກຕາມແຕ່ລະດູການ. ປູກພືດຕະກູນຖົ່ວໃນລະດູທີນຶ່ງສາກ່ອນ ຈຶ່ງປູກພືດແນວອື່ນໃນແຖວໄຮ່ດຽວກັນຂອງລະດູຕໍ່ໄປ. ພືດຕະກູນຖົ່ວຈະຊ່ວຍປັບປຸງດິນໃຫ້ສົມບູນ ດັ່ງນັ້ນການເອົາພືດແນວອື່ນມາປູກຫລັງຈາກປູກພືດຕະກູນຖົ່ວແລ້ວຈະເຮັດໃຫ້ພືດດັ່ງກ່າວໃຫ້ຜົນຜະລິດສູງ. ພືດຕະກູນຖົ່ວທີ່ເຄີຍປູກຢູ່ບ້ານເຮົາມີ ຖົ່ວຂຽວ ຖົ່ວເຫລືອງ ຖົ່ວດຳ ຖົ່ວສະແດດ ຖົ່ວຟູມ ຖົ່ວດິນ ແລະອື່ນໆ.



## ບາດກ້າວທີ 11

# ໄຮ່ຄັນໄດ

ແຕ່ລະປີ ຄັນໄຮ່ຈະຊ່ວຍສະສົມເກັບດິນໜ້າທີ່ມາເຊາະຈາກເບື້ອງເທິງ. ຖິ້ມງ່າໄມ້ ແລະກ້ອນຫີນໃສ່ກາງແຖວຂອງພືດຄັນໄຮ່ ມັນຈະຊ່ວຍໃຫ້ດິນຄ່ອຍຄູນຂຶ້ນຢູ່ເບື້ອງລຸ່ມຂອງຄັນໄຮ່. ສືບຕໍ່ປະຕິບັດແບບນີ້ເລື້ອຍໆ 4 ຫາ 5 ປີຕໍ່ໄປ ໜ້າດິນຂອງແຖວໄຮ່ກໍຈະບໍ່ຄ້ອຍງ່ຽງປານໃດ. ດົນໆໄປ ໄຮ່ຂອງທ່ານກໍຈະກາຍເປັນໄຮ່ຄັນໄດໂດຍເທວະດາເປັນຜູ້ປັບໜ້າດິນໃຫ້.

